ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ ທຫລ
NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟັກ (856-21) 213109, 213110

ພິທີປະກາດການຈັດຕັ້ງພະນັກງານນຳພາ-ຄຸ້ມຄອງຂອງ ສຄຄຊ

ໃນວັນທີ 29 ກັນຍາ 2026, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດພິທີປະກາດການຈັດຕັ້ງ ພະນັກງານນຳພາ-ຄຸ້ມຄອງຂອງ ທຫລ ໂດຍການໃຫ້ກຽດເຂົ້າຮ່ວມຂອງ ທ່ານ ສຸລິສັກ ທຳນຸວົງ ກຳມະການປະຈຳ ພັກ, ຮອງຜູ້ວ່າການ ທຫລ, ມີບັນດາພະນັກງານຫຼັກແຫຼ່ງນຳພາ ແລະ ວິຊາການກ່ຽວຂ້ອງຂອງ ທຫລ ເຂົ້າຮ່ວມຢ່າງ ພ້ອມພຽງ.

ໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການໃນການປັບປຸງການຈັດຕັ້ງ ໃຫ້ສອດຄ່ອງກັບໜ້າທີ່ວຽກງານໃນ ເງື່ອນໄຂໃໝ່ ຢູ່ ທຫລ, ໂດຍສະເພາະຢູ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ), ຂັ້ນເທິງຈຶ່ງໄດ້ ຕົກລົງປັບປຸງ 09 ຕຳແໜ່ງງານ ໂດຍແຕ່ງຕັ້ງ ທ່ານ ວິລະເດດ ທອງວັນຄຳ ຫົວໜ້າພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ ເປັນຮອງຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພ້ອມດ້ວຍ ຂັ້ນຄະນະພະແນກຈຳນວນ 8 ຕຳແໜ່ງງານ.

ໃນຕອນທ້າຍຂອງພິທີ, ທ່ານ ສຸລິສັກ ທຳນຸວົງ ໄດ້ໃຫ້ກຽດມີຄຳເຫັນໂອ້ລົມ ແລະ ມີທິດຊີ້ນຳ ໃນການ ປັບປຸງການຈັດຕັ້ງໃນຄັ້ງນີ້, ຈິດໃຈລວມກໍ່ແມ່ນ ເພື່ອເປັນການປະຕິບັດລະບອບຕາມແນວທາງນະໂຍບາຍລວມຂອງ ພັກ ແລະ ນິຕິກຳກ່ຽວກັບວຽກງານພະນັກງານ ໂດຍສະເພາະແມ່ນການປະຕິບັດສັບປ່ຽນໜ້າທີ່-ບ່ອນປະຈຳການ ຂອງພະນັກງານ ເພື່ອແນໃສ່ປັບປຸງວຽກງານໃຫ້ເຄື່ອນໄຫວຄ່ອງຕົວຂຶ້ນ ແລະ ທັງເປັນການກໍ່ສ້າງຍົກລະດັບ ພະນັກງານນຳພາ-ຄຸ້ມຄອງ ຂອງ ສຄຄຊ ໃຫ້ສາມາດນຳພາ-ຊີ້ນຳຮອບດ້ານໃນຫຼາຍວຽກງານຍິ່ງຂຶ້ນ.

ຂ່າວ: ກົມຈັດຕັ້ງ ແລະ ພະນັກງານ
ພາບ: ຫ້ອງການ

ຢູ່ເມືອງລາວໃຊ້ເງິນກີບລາວ